# ໂອເຊ (ໂຮເຊ)

## ເຮົາປະຖິ້ມພວກເຈົ້າຈົນພວກເຈົ້າຫລົບມາຕັ້ງໃຈໃໝ່

| | |
|---|---|
| ໃຈຄວາມສຳຄັນ | ເຖິງຜິດຖຽງກັນພຣະເຈົ້າກໍຍັງຮັກ |
| ຂໍ້ຄວາມສຳຄັນ | ໖:໖ |
| ຈຳນວນບົດ | ໑໔ |
| ເຣື່ອງເກີດຂຶ້ນແຕ່ປີ | ໗໗໕ ຈົນເຖິງປີ ໗໒໕ ກ່ອນ ຄ.ສ. |
| ປະຈຳຢູ່ທີ່ | ພາກເໜືອ |
| ໂອເຊແປວ່າ | ຄວາມພົ້ນ |
| ຜູ້ທຳນວາຍຄົນທີ | ໕ |

## ໑. ວ່າດ້ວຍກາລເວລາຂອງໂອເຊ

ໂອເຊເປັນຄົນທຳນວາຍຄາວສຸດທ້າຍຂອງອານາຈັກຊາມາເຣີ ຄື ໃນຄາວເຢໂຣໂບອາມທີສອງເປັນກະສັດນັ້ນ ໂອເຊໄດ້ທຳນວາຍຢູ່ເປັນເວລາຫ້າປີ ໃນຣະຫວ່າງ ໖໐ ປີນັ້ນເພິ່ນໄດ້ດຳເນີນຊີວິດຢູ່ກັບອາໂມດ ໂຢເອນ ໂຢນາ ມີເກແລະເອຊາອີ ໃນຣະຫວ່າງນີ້ເປັນຄາວທີ່ພວກອິສ-ຣາເອັນເຮັດບໍ່ດີບໍ່ງາມ ຄືພວກເຂົາໄດ້ຂະບົດຕໍ່ພຣະເຈົ້າຈົນພຣະເຈົ້າຊົງປະຖິ້ມພວກເຂົາ

## ໒. ວ່າດ້ວຍເນື້ອຄວາມ

ຄຳສອນ ຂອງ ໂອເຊ ໄດ້ຕົກຖືກ ຊາວ ອິສຣາເອັນ ແລະ ຊາວຢູດາ ອາໂມດໄດ້ສແດງຄວາມບໍຣິສຸດຂອງພຣະເຈົ້າ ແຕ່ໂອເຊໄດ້ສແດງຄວາມ

ຣັກຂອງພຣະເຈົ້າແກ່ພວກຂອງພຣະອົງ ຄວາມຣັກທີ່ໂຮເຊໄດ້ສແດງນັ້ນແມ່ນເພິ່ນໄດ້ເອົາເມັຍຜູ້ທີ່ບໍ່ສັດຊື່ຕາມຄຳສັ່ງຂອງພຣະເຈົ້າ (ບົດທີ ໑-໓) ເຖິງແມ່ນວ່າເມັຍຂອງເພິ່ນຈະຫລິ້ນຊູ້ຈົນມີລູກກໍຕາມ ໂຮເຊກໍຍັງຣັບເອົາລາວແລະຍັງຣັກແພງຢູ່ ນີ້ເປັນຄຳອຸປມາເຖິງເຫດການທີ່ພຣະເຈົ້າຊົງເຫັນແກ່ພວກທີ່ບໍ່ສັດຊື່ຂອງພຣະອົງ ການໄຖ່ເມັຍໃນບົດທີສາມນັ້ນປຽບໃສ່ຄວາມຣັກຂອງພຣະເຈົ້າທີ່ມີຕໍ່ພວກອິສຣາເອັນຜູ້ບໍ່ສັດຊື່ແລະຜູ້ນົບຣູບເຄົາ-ຣົບ ສນັ້ນພວກເຂົາຈຶ່ງຈະຕ້ອງຖືກໂທດ ໂຮເຊໄດ້ເອີ້ນຄົນພວກນີ້ວ່າເອຟຣາອິມ ເພາະເອຟຣາອິມເປັນຊື່ຂອງຕະກູນໃຫຍ່ໃນສິບຕະກູນທີ່ຂະບົດຕໍ່ບຸດຂອງກະສັດຊາໂລໂມນ ພວກສິບຕະກູນນີ້ໄດ້ແຕກແຍກກັນແລ້ວໄດ້ພາກັນຂາບໄຫວ້ຣູບເຄົາຣົບທີ່ເມືອງເບດເອັນ

ໃນພາຍຫລັງພຣະເຈົ້າຊົງເອີ້ນເອົາພວກອິສຣາເອັນໃຫ້ຫລັບມາຫາພຣະອົງ (໒:໑໖-໒໔; ໑໔:໑-໕) ພຣະເຈົ້າຈະຊົງໄຖ່ເອົາພວກເຂົາດ້ວຍຄວາມຕາຍຂອງພຣະເຢຊູ

ລູກສາມຄົນຂອງໂຮເຊໝາຍເຖິງປວັດຂອງພວກອິສຣາເອັນຄື

໑. ຢິເຊເອັນ ໝາຍເຖິງອານາຈັກຊາມາຣີທີ່ພຣະເຈົ້າຊົງເຣັດໃຫ້ກະຈັດກະຈາຍໄປ (໑:໔-໕)

໒. "ໂຣຣິກາມາ" ແປວ່າຜູ້ບໍ່ມີຄວາມອີ່ດູ (໑:໖-໗)

໓. "ໂລອາມມີ" ໝາຍ ຄວາມ ວ່າ ບໍ່ ເປັນ ພວກ ຂອງ ພຣະອົງ ພຣະເຈົ້າຈະຊົງເລືອກເອົາພວກໃໝ່ໄວ້ (໑:໙ ໂຣມ ໙:໒໔-໒໖)

## ໓. ການແບ່ງເປັນພາກ

ພາກທີ ໑ ການກັບໃຈຫລິ້ນຊູ້ແລະການຫລິບຕັ້ງໃຈໃໝ່ ບົດ ໑–໓

ພາກທີ ໒ ໂທດຈະຖືກພວກເຂົາຖ້າພວກເຂົາບໍ່ກັບຄືນມາຫາພຣະເຈົ້າ ບົດ ໔–໑໓

ພາກທີ ໓ ຄຳເຊີນຂອງພຣະເຈົ້າແລະຄຳປະຕິຍານ ບົດ ໑໔